# ພາລະກິດເພື່ອຮັບໃຊ້ພຣະເຈົ້າຂອງພວກເຮົາ



ບົດຮຽນທີ 11 ສໍາລັບ
ສະບາໂຕທີ 12 ກັນຍາ
2026


“ເພາະວ່າ ເຈົ້າທັງຫລາຍຮູ້ຈັກພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາແລ້ວວ່າ ເຖິງແມ່ນວ່າ ພຣະອົງຊົງຮັ່ງມີ ພຣະອົງກໍຍັງຊົງຍອມກາຍເປັນຄົນຍາກຈົນເພາະເຫັນແກ່ເຈົ້າທັງຫລາຍ ເພື່ອເຈົ້າທັງຫລາຍຈະໄດ້ກາຍເປັນຄົນຮັ່ງມີ ເນື່ອງຈາກຄວາມຍາກຈົນຂອງພຣະອົງ.”
2 ໂກຣິນໂທ 8:9

ການຈັດການຊັບສິນ (ສັນທະພາລະ) ແມ່ນວິທີທີ່ບຸກຄົນຈັດການບໍລິຫານກັບສິ່ງທີ່ຕົນເອງໄດ້ຮັບມອບໝາຍໃຫ້ເຮັດ.

ໃນບໍຣິບົດຂອງຈົດໝາຍສະບັບທີ 2 ຂອງອາຈານໂປໂລເຖິງຊາວໂກຣິນໂທ, ສັນທະພາລະ ໝາຍເຖິງໂຄງການສະເພາະຂອງອັກຂະທູດ: ນັ້ນກໍ່ຄື: ການທີ່ຄົນຕ່າງຊາດໄດ້ລວບລວມເງິນເພື່ອສະສົມຊ່ວຍເຫລືອນະຄອນເຢຣູຊາເລັມ, ເຊິ່ງປະສົບກັບຊ່ວງເວລາທີ່ຍາກລຳບາກ

ຊາວໂກຣິນໂທກໍ່ໃຫ້ຄຳໝັ້ນສັນຍາວ່າຈະຊ່ວຍເຫລືອ, ແລະ ເວລາສຳລັບການລົງມືປະຕິບັດກໍ່ໃກ້ເຂົ້າມາແລ້ວ. ຄຣິດຕະຈັກໃນແຂວງມາເກໂດເນຍກໍ່ໄດ້ພ້ອມສຳລັບການເລີ່ມພາລະກິດແລ້ວ. ອຈ ໂປໂລ ບໍ່ໄດ້ສົນໃຈກັບຈຳນວນເງິນທີ່ກ່ຽວຂ້ອງ, ແຕ່ສົນໃຈໃນແຮງຈູງໃຈ ແລະ ຄວາມກະຕືລືລົ້ນ ທີ່ຜູ້ເຊື່ອຈະສະແດງອອກມາໃນໂອກາດນີ້ ເພື່ອຕອບສະໜອງຕໍ່ພຣະຄຸນທີ່ພວກເຂົາໄດ້ຮັບ.



- ແຫລ່ງທີ່ມາຂອງສັນທະພາລະ:
  - ຕົວຢ່າງຂອງພຣະເຢຊູ
  - ການຕອບສະໜອງຕໍ່ພຣະຄຸນທີ່ໄດ້ຮັບ
- ຈະດຳເນີນການທີ່ກ່ຽວຂ້ອງກັບສັນທະພາລະໄດ້ຢ່າງໃດ:
  - ການວາງແຜນການທີ່ເໝາະສົມ
  - ທັດສະນະຄະຕິທີ່ຖືກຕ້ອງ
- ຜົນລັບຂອງສັນທະພາລະ:
  - ຄວາມສາມັກຄີຂອງຄຣິດຕະຈັກ



# ແຫລ່ງທີ່ມາຂອງສັບທະພາລະ

# ຕົວຢ່າງຂອງພຣະເຢຊູ

"ເພາະວ່າ ເຈົ້າທັງຫລາຍຮູ້ຈັກພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າ ຂອງພວກເຮົາແລ້ວວ່າ ເຖິງແມ່ນວ່າ ພຣະອົງຊົງຮັ່ງມີ ພຣະອົງກໍ ຍັງຊົງຍອມກາຍເປັນຄົນຍາກຈົນ ເພາະເຫັນແກ່ເຈົ້າທັງຫລາຍ ເພື່ອເຈົ້າທັງຫລາຍຈະໄດ້ກາຍເປັນຄົນຮັ່ງມີ ເນື່ອງຈາກຄວາມ ຍາກຈົນຂອງພຣະອົງ." 2 ໂກຣິນໂທ 8:9

ຄວາມສຳພັນລະຫວ່າງພຣະຄຸນຂອງພຣະເຈົ້າ ແລະ ການ ເອື້ອເຟື້ອເພື່ອແຜ່ ແມ່ນຫຍັງ? (2 ກຣທ 8:1-2)

ພຣະເຈົ້າຊົງປະທານພຣະຄຸນໃຫ້ແກ່ຄຣິດຕະຈັກມາເກໂດເນຍ ແລະພວກເຂົາກໍ່ "ເຕັມລົ້ນໄປດ້ວຍການເອື້ອເຟື້ອເພື່ອແຜ່" (2 ກຣທ 8:2 ). ແລະ ນີ້ແມ່ນພຣະຄຸນຂອງພຣະເຈົ້າສຳລັບພວກ ເຂົາ ແລະ ສຳລັບພວກເຮົາ:



ແລະ ພຣະອົງເຮັດທຸກສິ່ງດ້ວຍ ຄວາມຮັກເພື່ອພວກເຮົາ! (ຢຮ 15:13; ອຟຊ 5:2; ຄລຕ 2:20 ; 1 ຢຮ 3:16).

ແລ້ວພວກເຮົາຈະຕອບສະໜອງຕໍ່ ຄວາມຮັກຂອງພຣະອົງແບບໃດ? "ພວກເຈົ້າໄດ້ຮັບລ້າໆໂດຍບໍ່ຄິດຄ່າ ຢ່າງໃດ ຈົ່ງໃຫ້ລ້າໆໂດຍບໍ່ຄິດຄ່າ ຢ່າງນັ້ນ" (ມທ 10:8).

ເຖິງວ່າພຣະອົງຈະຮຸ່ງເຮືອງ ແຕ່ພຣະອົງກໍ່ພ້ອມມາເປັນຄົນທຸກຈົນ (2 ກຣທ 8:9)



ພຣະອົງໄດ້ອອກຈາກສະຫວັນມາ ອາໄສຢູ່ໃນໂລກ



ພຣະອົງມາເປັນຊ່າງໄມ້



ພຣະອົງມາອາໄສຢູ່ສະຖານທີ່ທີ່ມີ ສັດຕູ



ພຣະອົງສວມມົງກຸດສະຫວັນ ແລະ ມົງກຸດໜາມ



# ການຕອບສະໜອງຕໍ່ພຣະຄຸນທີ່ໄດ້ຮັບ

"ບໍ່ເໝືອນດັ່ງເຮົາໄດ້ຄາດໝາຍໄວ້, ແຕ່ຂໍ້ສຳຄັນທີ່ສຸດ ແມ່ນພວກເຂົາໄດ້ຖວາຍຕົວເອງແກ່ອົງພຣະຜູ້ເປັນເຈົ້າກ່ອນ ແລ້ວໄດ້ມອບຕົວໃຫ້ເຮົາຕາມນ້ຳພຣະໄທຂອງພຣະເຈົ້າ." 2 ໂກຣິນໂທ 8:5

## ສັງເກດເບິ່ງຊາວມາເກໂດເນຍຕອບສະໜອງຕໍ່ພຣະຄຸນ



ພວກເຂົາຮັບເອົາພຣະຄຸນຂອງພຣະເຢຊູ (2 ກຣທ 8:9)

ພວກເຂົາມອບຕົນເອງໃຫ້ແກ່ພຣະອົງ(2 ກຣທ 8:5)



ພວກເຂົາວິງວອນຂໍສິດໃນການຊ່ວຍເຫລືອຄົນອື່ນ (2 ກຣທ 8:4)

ເຖິງວ່າຈະຍາກຈົນ ແຕ່ພວກເຂົາກໍ່ຊ່ວຍເທົ່າທີ່ຊ່ວຍໄດ້ (2 ກຣທ 8:2-3)

## ສິ່ງເຫລົ່ານີ້ສອນພວກເຮົາຫຍັງແດ່?

**ກະຕັນຍູຕໍ່ພຣະຄຸນຂອງພຣະອົງ (2 ກຣທ 9:15)**
ພຣະເຢຊູໄດ້ໃຫ້ທຸກສິ່ງແກ່ພວກເຮົາ. ຄວາມກະຕັນຍູຂອງພວກເຮົາກໍ່ຄືມອບຖວາຍຕົນເອງໃຫ້ແກ່ພຣະອົງ

**ມີຄວາມປາຖະໜາທີ່ຈະແບ່ງປັນພຣະພອນຂອງພຣະເຈົ້າ (2 ກຣທ 9:11a)**
ພວກເຮົາໃຫ້ຄົນອື່ນ ເພາະວ່າພວກເຮົາໄດ້ຮັບຈາກພຣະເຈົ້າກ່ອນ

**ມີຄວາມຮັກທີ່ແທ້ຈິງ (2 ກຣທ 8:24)**
ການເອື້ອເຟື້ອເພື່ອແຜ່ ເປັນຫລັກຖານວ່າພວກເຮົາມີຄວາມຮັກຢູ່ໃນຈິດໃຈ



ຈະດຳເນີນການທີ່ກ່ຽວຂ້ອງກັບສັນທະ
ພາລະໄດ້ຢ່າງໃດ:

# ການວາງແຜນທີ່ເໝາະສົມ

"ທຸກຄົນຈົ່ງໃຫ້ຕາມທີ່ຕົນໄດ້ຄິດໝາຍໄວ້ໃນໃຈ ບໍ່ແມ່ນໃຫ້ດ້ວຍຄິດເສຍດາຍ ຫລືດ້ວຍຂືນໃຈໃຫ້ ເຫດວ່າ ພຣະເຈົ້າຊົງຮັກຄົນນັ້ນ ທີ່ໃຫ້ດ້ວຍຊື່ນໃຈຍິນດີ." 2 ໂກຣິນໂທ 9:7




ແຜນການທີ່ ອຈ ໂປໂລສະເໜີແມ່ນການຮວບຮວມເງິນບໍລິຈາກພິເສດຈາກຄຣິດຕະຈັກມາເກໂດເນຍ ແລະ ອະຂາຢາ (ເປັນແຂວງທີ່ເມືອງໂກຣິນໂທຕັ້ງຢູ່) ເພື່ອຊ່ວຍເຫລືອຄຣິດຕະຈັກທີ່ຢູ່ ເຢຣູຊາເຣັມ (ໂຣມ 15:26).

ຕອນທີ່ອັກຂະທູດໂປໂລ ໄດ້ສະເໜີແຜນການນີ້ທີ່ເມືອງໂກໂລຊາຍໃນໜຶ່ງປີກ່ອນໜ້ານັ້ນ, ແຜນການນີ້ໄດ້ຮັບການຕອບສະໜອງຢ່າງກະຕືລືລົ້ນ ເຖິງວ່າຈະບໍ່ທັນໄດ້ຄົບເປົ້າໝາຍທີ່ກຳນົດໄວ້ກໍ່ຕາມ(2 ກຣທ 9:1-2). ຢ່າງໃດກໍ່ຕາມ, ສະມາຊິກແຕ່ລະຄົນຕັ້ງໃຈໃນການທີ່ຈະບໍຣິຈາກເປັນຈຳນວນເງິນຕາມກຳລັງ(2 ກຣທ 9:7a).



ເມື່ອວາງແຜນບໍຣິຈາກແລ້ວ ແຕ່ລະຄອບຄົວປະເມີນຕົນເອງ ແລະ ຕັ້ງເປົ້າໝາຍທີ່ເປັນໄປໄດ້ຕາມຖານະການເງິນຂອງຕົນເອງ



ອີກປະເດັນໜຶ່ງທີ່ອຈ ໂປໂລ ກ່າວເຖິງໃນແຜນການຂອງເພິ່ນກໍ່ຄື ພວກເຂົາບໍ່ຄວນບໍຣິຈາກທັງໝົດໃນຄັ້ງດຽວ, ແຕ່ຄວນເກັບເງິນໄວ້ໃນຈຳນວນເລັກນ້ອຍໃນແຕ່ລະອາທິດ ຈົນກວ່າຈະຄົບຈຳນວນ (1 ກຣທ 16:2). ດ້ວຍວິທີນີ້ເອງ, ເມື່ອ ອຈ ໂປໂລມາເຖິງ ເງິນກໍ່ຈະຖືກຮວບຮວມມາໃຫ້ເພິ່ນໄດ້ຢ່າງເໝາະສົມ (2 ກຣທ 9:3-5).

# ທັດສະນະຄະຕິທີ່ຖືກຕ້ອງ

"ເພາະເຮົາເປັນພະຍານໄດ້ວ່າ ພວກເຂົາສັດທາຖວາຍໂດຍສຸດຄວາມສາມາດຂອງພວກເຂົາ ແລະເຫຼືອຄວາມສາມາດຂອງພວກເຂົາເສຍອີກ,"
2 ໂກຣິນໂທ 8:3

ເພື່ອເປັນການກະຕຸ້ນການເອື້ອເຟື້ອເພື່ອແຜ່ຂອງຊາວໂກໂລຊາຍ, ອຈ ໂປໂລ ໄດ້ ຍົກຕົວຢ່າງຂອງຊາວ ມາເກໂດເນຍ ໃຫ້ເຫັນ. ໃນຄຣິດຕະຈັກເຫລົ່ານັ້ນ, ພີ່ນ້ອງໄດ້ ສະແດງການຖວາຍຂອງພວກເຂົາອອກມາຢ່າງເໝາະສົມ, ເພາະພວກເຂົາຖວາຍ....

| | |
|---|---|
| ດ້ວຍໃຈຍິນດີ (2 ກຣທ 8:2a) | ພວກເຂົາຮູ້ສຶກຍິນດີທີ່ໄດ້ຖວາຍ |
| ດ້ວຍຄວາມເອື້ອເຟື້ອເພື່ອແຜ່(2 ກຣທ 8:2b) | ຄວາມຍາກຈົນບໍ່ໄດ້ເປັນອຸປະສັກ |
| ດ້ວຍຄວາມເຕັມໃຈ (2 ກຣທ 8:3) | ພວກເຂົາເຮັດດ້ວຍຄວາມສະໝັກໃຈ |
| ດ້ວຍສິດທິພິເສດ (2 ກຣທ 8:4) | ສິ່ງທີ່ພວກເຂົາເຮັດໄດ້ສະແດງຄວາມຮັກຕໍ່ພຣະເຈົ້າ ແລະ ຕໍ່ຄຣິດຕະຈັກ |
| ດ້ວຍການອຸທິດຕົນເອງ (2 ກຣທ 8:5) | ຍ້ອນພວກເຂົາທຸ້ມເທຕໍ່ພຣະເຈົ້າ, ພວກເຂົາຈຶ່ງທຸ້ມເທຕໍ່ຄົນອື່ນເຊັ່ນກັນ |



# ເງິນລັບຂອງສັບທະພາລະ

# ຄວາມສາມັກຄີຂອງຄຣິດຕະຈັກ

“ເພາະວ່າ ການຮັບໃຊ້ໃນການບົວລະບັດ ບໍ່ແມ່ນເປັນການຊ່ວຍພວກໄພ່ພົນຂອງພຣະອົງ ທີ່ຂາດເຂີນເທົ່ານັ້ນ, ແຕ່ຍັງເປັນເຫດໃຫ້ມີການໂມທະນາຂອບພຣະຄຸນພຣະເຈົ້າຫລວງຫລາຍອີກດ້ວຍ.”
2 ໂກຣິນໂທ 9:12



ການຖວາຍທີ່ນຳໄປຊ່ວຍນະຄອນເຢຣູຊາເລັມນັ້ນ ມີຜົນດີຫລາຍຢ່າງ (2 ກຣທ 9:12).




ຊາວຢິວ ແລະ ຄົນຕ່າງຊາດຜູກພັນກັນໂດຍສາຍສຳພັນແຫ່ງການຊ່ວຍເຫລືອ ແລະ ຄວາມກະຕັນຍູ (ໂຣມ 15:26-27). ໃນທາງດຽວກັນນີ້, ເປົ້າໝາຍສູງສຸດຂອງອັກຄະທູດໂປໂລ ຈຶ່ງສຳເລັດ: ນັ້ນກໍ່ຄື ຄວາມເປັນເອກະພາບກັນໃນຄຣິດຕະຈັກ

ຜົນລັບອີກຢ່າງໜຶ່ງກໍ່ຄື: ການຈັດການກັບການຖວາຍນັ້ນມີບົດຮຽນສຳລັບພວກເຮົາຄື: ທຸກສິ່ງທຸກຢ່າງ ຕ້ອງເຮັດຢ່າງເປັນລະບຽບ ແລະ ປະຕິບັດຕາມຂັ້ນຕອນທີ່ຖືກຕ້ອງ.



ໂບດທ້ອງຖິ່ນ | ມິດຊັ້ນ, ອົງກອນ | ສຳນັກງານພາກພື້ນ | ສຳນັກງານກາງ

ອຈ ໂປໂລ ແຕ່ງຕັ້ງໃຫ້ຕີໂຕ ເບິ່ງແຍງການຮວບຮວມ ແລະ ຄຣິດຕະຈັກຕ່າງໆ ກໍ່ຊ່ວຍກັນແຕ່ງຕັ້ງພີ່ນ້ອງ ໃຫ້ເບິ່ງແຍງວຽກນີ້ເຊັ່ນກັນ (2 ກຣທ 8:16-24), ບໍ່ມີວິທີອື່ນໃດທີ່ເໝາະສົມກ່ວານີ້ ໃນການຮວບຮວມແລະສົ່ງການຖວາຍໄປທີ່ນະຄອນເຢຣູຊາເລັມ

“ວຽກງານຂອງພຣະເຈົ້າຕ້ອງໄດ້ຮັບການຄ້ຳຈູນດ້ວຍເງິນສິບລົດ, ເງິນອຸທິດ ແລະ ເງິນຖວາຍ. ຕອນນີ້ ພຣະເຈົ້າຊົງຮຽກຮ້ອງໃຫ້ເບິ່ງແຍງຮັບຜິດຊອບແກ່ບັນດາຜູ້ທີ່ໄດ້ຮັບມອບໝາຍເບິ່ງແຍງຊັບສິນຂອງພຣະອົງ

ພຣະອົງບໍ່ຕ້ອງການສິ່ງໃດຈາກຜູ້ທີ່ຕິດຕາມພຣະອົງ ນອກຈາກສິ່ງທີ່ພຣະອົງໄດ້ຊົງກະທຳເພື່ອພວກເຂົາ.

ຜູ້ທີ່ຝຶກຝົນຕົນເອງໃນການຄວບຄຸມຕົນເອງ ແລະ ເສຍສະຫລະເພື່ອວຽກງານຂອງພຣະເຈົ້າໂດຍການເຮັດຕາມສິ່ງທີ່ພຣະອົງໄດ້ເປັນແບບຢ່າງໃຫ້. ພຣະອົງຊົງສະຫລະບັນລັງຂອງພຣະອົງທີ່ສະຫວັນ ລົງມາເປັນຄົນຍາກຈົນ, ເພື່ອວ່າໂດຍຄວາມຍາກຈົນຂອງພຣະອົງນັ້ນ ພວກເຮົາຈະໄດ້ຮັບຊັບສົມບັນອັນນິຣັນດອນ, ພຣະອົງບໍ່ໄດ້ພຽງແຕ່ສະຫລະຊັບສົມບັນ ຂອງພຣະອົງເທົ່ານັ້ນ ແຕ່ຍັງໄດ້ສະຫລະຊີວິດຂອງພຣະອົງເຊັ່ນກັນ. ພຣະອົງໄດ້ກຳຈັດອຸປະສັກທຸກສິ່ງທຸກຢ່າງທີ່ຂວາງທາງບໍ່ໃຫ້ເຂົ້າຫາພຣະອົງນັ້ນອອກໄປ. ແລະ ພຣະອົງຊົງເຊື້ອເຊີນພວກເຮົາໃຫ້ເປັນຜູ້ຮ່ວມງານການປະກາດກັບພຣະອົງ.

EGW (The Upward Look, April 9)